ການເປີດຕົວບົດລາຍງານການພັດທະນາມະນຸດໃນພາກພື້ນ 2024
–
"ການສ້າງອະນາຄົດຂອງພວກເຮົາ - ທິດທາງໃຫມ່ສໍາລັບການພັດທະນາມະນຸດໃນອາຊີ - ປາຊີຟິກ"

ວັນທີ 21 ທັນວາ 2023, 10.30-12.30
**ນະຄອນຫຼວງວຽງຈັນ**

**21 ທັນວາ 2023, ນະຄອນຫຼວງວຽງຈັນ, ສປປ ລາວ**— ໃນຂະນະທີ່ພາກພື້ນອາຊີ-ປາຊີຟິກ ສາມາດດຶງດູດແຮງບັນດານໃຈຈາກຄວາມສໍາເລັດທີ່ຜ່ານມາ ແລະ ຕົວແບບທີ່ໄດ້ຮັບການພິສູດແລ້ວ, ເພື່ອຊຸກຍູ້ການພັດທະນາຂອງມະນຸດໃນຍຸກຂອງພັດທະນາໃນປັດຈຸບັນນີ້, ບັນດາປະເທດຕ່າງໆຈະຕ້ອງຊອກຫາທິດທາງທີ່ຈະສາມາດໄປໃຫ້ໄກກວ່າວິທີການທີ່ໃຊ້ຜ່ານມາ. ປະຊາກອນສ່ວນໃຫຍ່ໃນຫຼາຍປະເທດ ແມ່ນໄດ້ປະເຊີນກັບບັນຫາຂອງການທີ່ບໍ່ສາມາດບັນລຸຄວາມມຸ່ງມາດປາດຖະໜາ ແລະ ພົບກັບສິ່ງທ້າທາຍທີ່ບໍ່ເຄີຍມີມາກ່ອນ, ລວມທັງຢູ່ໃນ ສປປ ລາວ.

ບົດລາຍງານການພັດທະນາມະນຸດພາກພື້ນອາຊີປາຊີຟິກ (RHDR) ປີ 2024 ໄດ້ມີການເປີດຕົວທີ່ນະຄອນຫຼວງວຽງຈັນເມື່ອວັນທີ 21 ທັນວາ 2023, ພ້ອມໄດ້ນໍາສະເໜີຜົນງານຂອງການຄົ້ນຄວ້າ, ຫຼັກຖານ, ແລະ ການວິເຄາະຂໍ້ມູນລ່າສຸດເພື່ອໃຫ້ມີການປະເມີນທີ່ຄົບຖ້ວນ, ແຕ່ສອດຄ່ອງກັບສະພາບການທາງດ້ານການພັດທະນາມະນຸດໃນ ຂົງເຂດອາຊີ ແລະ ປາຊີຟິກ.

ບົດລາຍງານດັ່ງກ່າວ ພາຍໃຕ້ຫົວຂໍ້ "ການສ້າງອະນາຄົດຂອງພວກເຮົາ - ທິດທາງໃຫມ່ສໍາລັບການພັດທະນາມະນຸດໃນຂົງເຂດອາຊີ - ປາຊີຟິກ" ໄດ້ຮັບການເປີດຕົວຢ່າງເປັນທາງການເມື່ອວັນທີ 6 ພະຈິກ ພ້ອມຈຸດສຸມທີ່ມຸ່ງໝາຍເຖິງອະນາຄົດ ດ້ວຍການສຶກສາດ້ານວິທີການ ທີ່ພາກພື້ນສາມາດຟື້ນຟູຂະບວນການພັດທະນາມະນຸດ, ໃນຂະນະທີ່ຕ້ອງໄດ້ກ້າວຜ່ານອຸປະສັກທີ່ທ້າທາຍໃນຕໍ່ໜ້າ.  ເຊິ່ງແມ່ນໄດ້ສະແດງເຖິງຄວາມສໍາຄັນຂອງການເຊື່ອມໂຍງ ລະຫວ່າງຍຸດທະສາດການພັດທະນາມະນຸດ ແລະ ການເຕີບໂຕທີ່ດີກວ່າ, ພ້ອມທັງຄວາມຈໍາເປັນທີ່ຈະຕ້ອງມີການກະກຽມຄວາມພ້ອມເພື່ອຍາດແຍ່ງເອົາໂອກາດໃນອະນາຄົດທີ່ມີທ່າແຮງຫຼາຍຢ່າງ ແລະ ເພີ່ມທະວີຄວາມພະຍາຍາມເພື່ອຫັນຍຸດທະສາດໃຫ້ກາຍເປັນການລົງມືປະຕິບັດ ແລະ ເຮັດໃຫ້ການປ່ຽນແປງເກີດຂຶ້ນໃຫ້ໄດ້.

ການເປີດຕົວບົດລາຍງານດັ່ງກ່າວຢູ່ ສປປ ລາວ ແມ່ນເປັນສ່ວນໜຶ່ງຂອງເວທີການສົນທະນາຂອງບັນດານັກຄົ້ນຄ້ວາ ເປັນເວລາ 1 ມື້ເຄິ່ງ, ເຊິ່ງໄດ້ຈັດຂຶ້ນ ໂດຍສະຖາບັນຄົ້ນຄວ້າເພື່ອການພັດທະນາ, ກະຊວງແຜນການ ແລະ ການລົງທຶນ, ເຊິ່ງງານດັ່ງກ່າວໄດ້ຮັບກຽດການເປີດພິທີ ໂດຍ ພະນະທ່ານ ສະຖາບັນດິດ ອິນສີຊຽງໃໝ່, ຮອງລັດຖະມົນຕີກະຊວງ ແຜນການ ແລະ ການລົງທຶນ ແລະ ການເປັນປະທານຮ່ວມຂອງ ທ່ານ ນາງ ມາທິນ ເທີເອີ, ຜູ້ຕາງໜ້າອົງການ ສະຫະ ປະຊາຊາດ ເພື່ອການພັດທະນາ (UNDP) ປະຈຳ ສປປ ລາວ. ງານດັ່ງກ່າວ ແມ່ນໄດ້ສຸມໃສ່ເພື່ອເຜີຍແຜ່ຜົນການ ຄົ້ນຄວ້າຂອງບົດລາຍງານ RHDR ປະຈາປີ 2024, ພ້ອມທັງໄດ້ສ່ອງແສງໃຫ້ເຫັນເຖິງຕົວຢ່າງຂອງບັນດາປະເທດ ຕ່າງໆໃນພາກປະຕິບັດຕົວຈິງ ຂອງວິທີການດ້ານຍຸດທະສາດ ຕໍ່ກັບສິ່ງທ້າທາຍທີ່ຊັບຊ້ອນ ທີ່ໂລກກຳລັງປະເຊີນໜ້າໃນ ປະຈຸບັນ ແລະ ປຶກສາຫາລືກ່ຽວກັບຄວາມເປັນໄປໄດ້ ໃນການໝູນໃຊ້ບົດຮຽນເຫຼົ່ານັ້ນຕໍ່ກັບສະພາບການຂອງ ສປປ ລາວ.

ໃນອາລະໂອກາດດັ່ງກ່າວ ແມ່ນເຫັນໄດ້ວ່າຖືກຈັດຂຶ້ນໃນເວລາທີ່ເໝາະສົມ ດ້ວຍການເຂົ້າຮ່ວມຂອງຜູ້ຕາງໜ້າຈາກໜ່ ວຍງານພາກລັດຖະບານ, ນັກວິຊາການ, ນັກຄົ້ນຄວ້າ, ອົງການຈັດຕັ້ງມະຫາຊົນ ແລະ ພາກເອກະຊົນ, ເນື່ອງຈາກວ່າ ລັດຖະບານແຫ່ງ ສປປ ລາວ ແມ່ນໄດ້ເລີ່ມຈັດຕັ້ງການວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ X ຂຶ້ນ, ເຊິ່ງຈະໄດ້ຊີ້ແຈງເຖິງວິໄສທັດ ເພື່ອການພັດທະນາຂອງປະເທດໃນຊຸມປີທີ່ຍັງເຫຼືອຂອງທົດສະວັດນີ້.

ພະນະທ່ານ ສະຖາບັນດິດ ອິນສີຊຽງໃໝ່, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໄດ້ກ່າວວ່າ “ ລັດຖະບານແຫ່ງ ສປປ ລາວ ມີຄວາມມຸ່ງໝັ້ນທີ່ຈະກ້າວໄປສູ່ການພັດທະນາມະນຸດຕາມການຍົກຕົວຢ່າງຜ່ານການ ເຜີຍແຜ່ບົດລາຍງານ ການພັດທະນາມະນຸດແຫ່ງຊາດ ຄັ້ງທີ 6 (NHDR ຄັ້ງທີ 6) ໃນປີທີ່ຜ່ານມານີ້ ພາຍໃຕ້ຫົວຂໍ້ ຊາວ ໜຸ່ມທີ່ເປັນຜູ້ຂັບເຄື່ອນການພັດທະນາແບບຍືນຍົງ”. ທ່ານ ສະຖາບັນດິດ ອິນສີຊຽງໃໝ່ ຍັງໄດ້ ຢັ້ງຢືນວ່າ ການຟື້ນຟູ ເສດຖະກິດ ທີ່ໄດ້ຮັບການສະໜັບສະໜູນຈາກການສ້າງວຽກເຮັດງານທຳ ແລະ ການປັບປຸງມາດຕະຖານຄວາມຍືນຍົງ ທາງດ້ານສິ່ງແວດລ້ອມໃນການລົງທຶນ ແລະ ອຸດສາຫະກຳແມ່ນບຸລິມະສິດທີ່ສຳຄັນຂອງລັດຖະບານ.

ທ່ານ ນາງ ມາທິນ ເທີເອີ, ຜູ້ຕາງໜ້າອົງການ UNDP ກ່າວວ່າ, “ບົດລາຍງານ RHDR ໄດ້ຮຽກຮ້ອງຢ່າງຊັດເຈນເພື່ອ ໃຫ້ມີທິດທາງໃໝ່ ກ່ຽວກັບການພັດທະນາ ທີ່ມີຄວາມສຳຄັນ ແລະ ໃນເວລາທີ່ເໝາະສົມຂອງ ສປປ ລາວ. ພວກເຮົາເຫັນ ໄດ້ໃນທົ່ວພາກພື້ນວ່າ ປະຊາຊົນແມ່ນມີຄວາມຮູ້ສຶກໝັ້ນຄົງຫຼຸດໜ້ອຍຖອຍລົງໄປເລື້ອຍໆ. ນອກຈາກນັ້ນ, ຍັງມີພາວະ

ການພັດທະນາທີ່ທ້າທາຍ ແລະ ສັບສົນທີ່ຕິດພັນກັບຜົນກະທົບຈາກການປ່ຽນແປງຂອງສະພາບດິນຟ້າອາກາດ, ການປ່ຽນແປງທາງດ້ານເຕັກໂນໂລຊີ, ການແຕກແຍກທາງພູມີສາດ-ເສດຖະກິດ ເຊິ່ງທັງໝົດນັ້ນແມ່ນລ້ວນແຕ່ຈະສົ່ງຜົນກະທົບຕໍ່ ສປປ ລາວ. ເພາະສະນັ້ນ ບົດລາຍງານດັ່ງກ່າວຈຶ່ງໄດ້ ເຮັດໃຫ້ພວກເຮົາເຫັນເຖິງຄວາມໝາຍຄວາມສໍາຄັນສໍາລັບພວກເຮົາໃນລະດັບປະເທດ, ເພື່ອທົບທວນຄືນໃຫມ່ ແລະ ປັບປຸງນະໂຍບາຍຕໍ່ກັບການພັດທະນາ ແລະ ການເຕີບໂຕຂອງພວກເຮົາ.

------------------

**ກ່ຽວກັບບົດລາຍງານການພັດທະນາມະນຸດຂອງ** UNDP

ໃນປີ 1990, ບົດລາຍງານການພັດທະນາມະນຸດສະບັບທໍາອິດ ໄດ້ນໍາສະເຫນີວິທີການໃຫມ່ ເພື່ອຄວາມກ້າວຫນ້າທາງດ້ານສະຫວັດດີການຂອງມະນຸດ. ການພັດທະນາມະນຸດ - ຫຼືວິທີການພັດທະນາມະນຸດ - ແມ່ນກ່ຽວກັບການຜັນຂະຫຍາຍຄວາມອຸດົມສົມບູນຂອງຊີວິດຂອງມະນຸດ, ນອກເໜືອ ຈາກຄວາມອຸດົມສົມບູນຂອງເສດຖະກິດເພື່ອການດໍາລົງຊີວິດຂອງມະນຸດ ເຊິ່ງຖືວ່າ ເປັນວິທີການ ທີ່ສຸມໃສ່ປະຊາຊົນ ແລະ ໂອກາດພ້ອມທາງເລືອກຂອງເຂົາເຈົ້າ. UNDP ແມ່ນໄດ້ມີການເຜີຍແຜ່ບົດລາຍງານການພັດທະນາມະນຸດໃນລະດັບໂລກ, ພາກພື້ນ ແລະ ລະດັບຊາດຢ່າງເປັນປະຈໍາ.

ເພື່ອເຂົ້າເຖິງບົດລາຍງານການພັດທະນາມະນຸດຂອງອາຊີ-ປາຊີຟິກ 2024 ກະລຸນາກົດໃສ່ລິ້ງ:
https://www.undp.org/asia-pacific/rhdr2024

**ສໍາລັບຂໍ້ມູນເພີ່ມຕື່ມ ກະລຸນາຕິດຕໍ່**

ທ່ານ ນາງ ອັກສອນທິບ ສົມວໍລະຈິດ
ຜູ້ຮັບຜິດຊອບດ້ານການສື່ສານ UNDP
ອີເມວ: *aksonethip.somvorachit@undp.org*
ໂທ: 021 267 778: 020 5502 1550

UNDP